# ມິຊຊາອາທິດທີ 25 ກຳມົດທຳມະດາ ປີ B
# ວັນອາທິດທີ 23 ກັນຍາ 2018



**ພຣະວໍລະສານໂດຍນັກບຸນມາກໂກ 9, 29-36**

ເມື່ອອອກຈາກທີ່ນັ້ນແລ້ວ, ພຣະເຢຊູເຈົ້າກໍສະເດັດຜ່ານແຂວງກາລີເລພ້ອມກັບພວກສາວົກໂດຍບໍ່ຢາກໃຫ້ໃຜຮູ້ຈັກ. ພຣະອົງຊົງສັ່ງສອນພວກສາວົກວ່າ: ບຸດມະນຸດຈະຖືກມອບໃນເງື້ອມມືຂອງຄົນທັງຫລາຍ, ເຂົາຈະປະຫານຊີວິດພຣະອົງ ແລະເມື່ອສິ້ນພຣະຊົນແລ້ວ ວັນທີສາມພຣະອົງຈະກັບຄືນຊີບ. ພວກສາວົກບໍ່ເຂົ້າໃຈຖ້ອຍຄຳເຫລົ່ານີ້ ທັງຢ້ານບໍ່ຫານຖາມພຣະອົງດ້ວຍ.

ແລ້ວພຣະອົງແລະພວກລູກສິດກໍມາຮອດເມືອງກາຟານາອຸມ. ພໍເຂົ້າໄປໃນເຮືອນ ພຣະອົງກໍຖາມພວກເຂົາວ່າ: ພວກເຈົ້າຖຽງກັນເລື່ອງຫຍັງນຳທາງ? ພວກເຂົາມິດຢູ່. ຍ້ອນລະຫວ່າງທາງພວກເຂົາໄດ້ຖຽງກັນວ່າຜູ້ໃດຈະໃຫຍ່ກວ່າໝູ່. ເມື່ອພຣະເຢຊູເຈົ້າຊົງປະທັບນັ່ງແລ້ວ ກໍຮຽກເອົາສາວົກທັງສິບສອງເຂົ້າມາກ່າວວ່າ: ຖ້າໃຜຢາກເປັນຜູ້ທີໜຶ່ງ ກໍໃຫ້ຜູ້ນັ້ນເປັນຜູ້ສຸດທ້າຍ ແລະເປັນຜູ້ຮັບໃຊ້ຜູ້ອື່ນທັງໝົດເຖີດ.

ແລ້ວນັ້ນ ພຣະອົງກໍຈູງເອົາເດັກນ້ອຍຜູ້ໜຶ່ງມາຢືນກາງພວກເຂົາ, ອຸ້ມເດັກນັ້ນແລ້ວກ່າວວ່າ: ຜູ້ໃດຮັບຕ້ອນເດັກນ້ອຍແບບນີ້ໃນນາມຂອງເຮົາກໍແມ່ນຕ້ອນຮັບເຮົາເອງ. ຜູ້ໃດຕ້ອນຮັບເຮົາ ກໍບໍ່ແມ່ນຮັບຕ້ອນເຮົາແຕ່ແມ່ນຮັບຕ້ອນອົງຜູ້ຊົງໃຊ້ເຮົາມາ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 9, 29-36**

ອາທິດແລ້ວນີ້, ເປໂຕໄດ້ຕອບຄຳຖາມຂອງພຣະເຢຊູເຈົ້າກ່ຽວກັບຕົວຂອງພຣະອົງວ່າ: ສຳລັບພວກເຈົ້າ, ເຮົາແມ່ນໃຜ? ແລະພຣະເຢຊູເຈົ້າກໍໄດ້ຄຳຕອບທີ່ຖືກຕ້ອງຈາກເປໂຕ: ທ່ານແມ່ນພຣະກຣິສໂຕ. ຄຳຕອບນີ້ພຣະເຢຊູເຈົ້າໄດ້ທຳໃຫ້ມັນກະຈ່າງແຈ້ງດ້ວຍການປະກາດເຖິງການທໍລະມານແລະຕາຍຂອງພຣະອົງແລະວັນທີສາມພຣະອົງຈະກັບເປັນຄືນມາ.

ເຖິງວ່າພຣະເຢຊູເຈົ້າຈະກ່າວຢ່າງຈະແຈ້ງເຊັ່ນນັ້ນກໍຕາມ ແຕ່ພວກສາວົກຂອງພຣະອົງກໍຍັງບໍ່ເຂົ້າໃຈແລະພວກເຂົາກໍບໍ່ຫານຈະຖາມພຣະອົງອີກ. ເປັນຫຍັງພວກເຂົາຈຶ່ງຍັງບໍ່ເຂົ້າໃຈກ່ຽວກັບຄຳສອນຂອງພຣະເຢຊູເຈົ້າ? ອາດຈະແມ່ນສິ່ງທີ່ພຣະເຢຊູເຈົ້າປະກາດເຖິງການທໍລະມານແລະຕາຍຂອງພຣະອົງບໍ່ສອດຄ່ອງກັບຄວາມນຶກຄິດໃນຫົວຂອງພວກສາວົກ. ເພາະພວກເຂົາຄິດວ່າພຣະເຢຊູເຈົ້າຈະແມ່ນພຣະເມດຊີອາຜູ້ທີ່ຈະມາຊ່ວຍພວກເຂົາໃຫ້ອອກຈາກຄວາມຍາກລຳບາກດ້ານການເມືອງ, ດ້ານຊີວິດການເປັນຢູ່ ແລະຍິ່ງໄປກວ່ານັ້ນພວກເຂົາຜູ້ທີ່ຕິດຕາມພຣະອົງມາຈະໄດ້ເປັນໃຫຍ່, ມີອຳນາດແລະຖານະໃນສັງຄົມ. ແຕ່ຄວາມເປັນຈິງບໍ່ຄືພວກເຂົາຄິດ. ເພາະສະນັ້ນ, ພວກເຂົາຈຶ່ງບໍ່ເຂົ້າໃຈ.

ວັນນີ້, ພຣະເຢຊູເຈົ້າບໍ່ພຽງແຕ່ປະກາດເຖິງການທໍລະມານແລະການຕາຍຂອງພຣະອົງເປັນເທື່ອທີສອງເທົ່ານັ້ນ ແຕ່ພຣະອົງຍັງສອນພວກເຂົາອີກເລື່ອງໜຶ່ງວ່າ: ຜູ້ເປັນໃຫຍ່ໃນພວກເຂົາ ຕ້ອງກາຍເປັນຜູ້ຮັບໃຊ້. ແລະຜູ້ທີໜຶ່ງໃນພວກເຂົາ ຕ້ອງກາຍເປັນຜູ້ສຸດທ້າຍ. ອັນເປັນຄຳສອນທີ່ກົງກັນຂ້າມກັບແນວຄິດຂອງໂລກ ແລະຍິ່ງໄປກວ່ານັ້ນມັນເປັນສິ່ງທີ່ພວກສາວົກຍອມຮັບໄດ້ຍາກ. ເພາະໃຜໆໃນພວກເຂົາກໍຢາກເປັນຜູ້ໃຫຍ່ແລະຜູ້ທີໜຶ່ງ.

ການທີ່ເປັນຜູ້ສຳຄັນແລະມີບົດບາດໃນສັງຄົມເປັນຄວາມປາດຖະໜາຂອງມະນຸດທຸກຄົນ. ແລະບໍ່ມີໃຜຢາກເປັນຄົນທຸກ, ຄົນຕໍ່າຕ້ອຍໃນສັງຄົມ. ສິ່ງນີ້ອາດເປັນສິ່ງສຳຄັນແລະຈຳເປັນສຳລັບມະນຸດ, ແຕ່ມັນເປັນສິ່ງກົງກັນຂ້າມກັບແຜນການແຫ່ງການໄຖ່ກູ້ຂອງພຣະເຢຊູເຈົ້າ. ເພາະພຣະອົງເປັນຜູ້ຮັ່ງມີ, ເປັນບຸດຂອງພຣະເຈົ້າ ແຕ່ພຣະອົງຕ້ອງຍອມສະລະທຸກສິ່ງຢ່າງເພື່ອລົງມາຮັບເອົາສະພາບຕໍ່າຕ້ອຍເປັນມະນຸດເໝືອນກັບພວກເຮົາ, ຍົກເວັ້ນແຕ່ບາບ. ເພື່ອໃຫ້ພວກເຮົາກາຍເປັນຜູ້ຮັ່ງມີໃນຄວາມທຸກຈົນຂອງພຣະອົງ. ໝາຍວ່າ ໃຫ້ພວກເຮົາໄດ້ກັບກາຍເປັນບຸດບຸນທຳຂອງພຣະບິດາເຈົ້າຜ່ານທາງການຕາຍແລະການກັບເປັນຄືນມາຂອງພຣະອົງ. ພວກເຮົາອາດຈະຖາມຕົວເອງວ່າ: ເປັນຫຍັງພຣະເຢຊູເຈົ້າຈຶ່ງກະທຳແບບນີ້? ຄຳຕອບກໍຄື ຍ້ອນຮັກມະນຸດ.

ແລະຜູ້ໃດຢາກເປັນລູກສິດຂອງພຣະອົງ ກໍຕ້ອງກະທຳແບບດຽວກັບອາຈານ ຄືຍອມເສຍສະລະນໍ້າໃຈ, ຄວາມມັກໄດ້, ຄວາມເຫັນແກ່ຕົວຂອງຕົນເພື່ອຮັບໃຊ້ຄົນອື່ນດ້ວຍຄວາມຮັກ. ອັນເປັນສິ່ງທີ່ບໍ່ງ່າຍສຳລັບພວກເຮົາ ແຕ່ຖ້າພວກເຮົາໄວ້ໃຈແລະເຊື່ອໝັ້ນໃນພຣະອົງເໝືອນດັ່ງເດັກນ້ອຍທີ່ວາງໃຈໃນຜູ້ປົກຄອງຂອງຕົນແລ້ວ ທຸກສິ່ງກໍເປັນໄປໄດ້. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ